ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ...174.../ລບ
ນະຄອນຫຼວງວຽງຈັນ, ວັນທີ...23.5.2014

# ດຳລັດ
# ວ່າດ້ວຍກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ, ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ, ສະບັບເລກທີ 30/ສພຊ, ລົງວັນທີ 19 ກໍລະກົດ 2013;
- ອີງຕາມ ມະຕິຕົກລົງຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ກຸມພາ 2014 ສະບັບເລກທີ 02/ລບ, ລົງວັນທີ 03/03/2014;
- ອີງຕາມ ການສະເໜີ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ສະບັບເລກທີ 0260/ກວຕ, ລົງວັນທີ 31 ມີນາ 2014.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫລັກການ, ລະບຽບການ ກ່ຽວກັບການສ້າງຕັ້ງ, ການຄຸ້ມຄອງບໍລິຫານ, ການນຳໃຊ້, ແລະ ການກວດກາ ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອລະດົມທຶນ, ສະໜອງທຶນ ໃຫ້ແກ່ການຄຸ້ມຄອງ ແລະ ຊຸກຍູ້ສົ່ງເສີມ ການຄົ້ນຄວ້າວິທະຍາສາດ, ການພັດທະນາເຕັກໂນໂລຊີ ແລະ ນະວັດຕະກຳ ແນໃສ່ໃຫ້ມີແຫຼ່ງທຶນທີ່ເໝາະສົມ ແລະ ໝັ້ນຄົງ ສຳລັບການຄົ້ນຄວ້າ ແລະ ພັດທະນາ, ການຖ່າຍທອດ ເຕັກໂນໂລຊີ, ການບໍລິການວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ມີປະສິດທິຜົນສູງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ**

ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ຂຽນຫຍໍ້ດ້ວຍຕົວອັກສອນ **ກທວຕ** ແມ່ນການຈັດຕັ້ງໜຶ່ງ ທີ່ເປັນເຈົ້າຕົນເອງດ້ານການເງິນ, ສ້າງຕັ້ງຂຶ້ນ ເພື່ອລະດົມ ແລະ ນຳໃຊ້ທຶນ ເຂົ້າໃນວຽກງານຄົ້ນຄວ້າ ແລະ ພັດທະນາ ເຂົ້າໃນການຜະລິດ, ຊຸກຍູ້ສົ່ງເສີມການເຄື່ອນໄຫວວິທະຍາສາດ, ພັດທະນາເຕັກໂນໂລຊີ ແລະ ນະວັດຕະກຳ ຂອງບັນດານັກຮຽນ, ນັກສຶກສາ, ນັກວິທະຍາສາດໜຸ່ມ ແລະ ຜູ້ທີ່ມີພອນສະຫວັນ, ແກ້ໄຂບັນຫາທີ່ຈຳເປັນ ແລະ ຮີບດ່ວນ ໃນການນຳໃຊ້ກອງທຶນໃຫ້ຖືກຕາມເປົ້າໝາຍ ແລະ ມີປະສິດທິຜົນສູງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຄົ້ນຄວ້າ ແລະ ພັດທະນາ** ໝາຍເຖິງ ການຄົ້ນຄວ້າປັບປຸງຄວາມຮູ້ວິທະຍາສາດ ແລະ ການພັດທະນາເຕັກໂນໂລຊີເດີມ ໃຫ້ເປັນຄວາມຮູ້ໃໝ່, ວິທີການໃໝ່, ເຕັກໂນໂລຊີໃໝ່ ຢ່າງເປັນລະບົບ ເພື່ອ ໝູນໃຊ້ໃນການອອກແບບ ແລະ ຜະລິດຕະພັນໃໝ່ ຮັບໃຊ້ສັງຄົມ;
2. **ການບໍລິການວິທະຍາສາດ ແລະ ເຕັກໂນໂລຊີ** ໝາຍເຖິງ ບັນດາການເຄື່ອນໄຫວບໍລິການ ທາງດ້ານຊັບສິນທາງປັນຍາ, ມາດຕະຖານ ແລະ ວັດແທກ, ການສະໜອງຄວາມຮູ້, ໃຫ້ຄຳປຶກສາດ້ານເຕັກນິກ, ວິທີການ, ສ້າງບຳລຸງ, ຍົກລະດັບ, ເຜີຍແຜ່ຂໍ້ມູນ ຂ່າວສານ ລວມທັງຜົນການຄົ້ນຄວ້າ ແລະ ພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ;
3. **ການຄຸ້ມຄອງບໍລິຫານ** ໝາຍເຖິງ ການຈັດຕັ້ງ, ການບໍລິຫານຈັດການ ແລະ ການຄຸ້ມຄອງບັນດາການເຄື່ອນໄຫວ ຂອງກອງທຶນ ໃຫ້ຖືກຕ້ອງຕາມ ແຜນການ, ແຜນງານ ແລະ ວຽກງານ ທີ່ຖືກຮັບຮອງຈາກສະພາບໍລິຫານກອງທຶນ.

**ມາດຕາ 4 ຫຼັກການບໍລິຫານກອງທຶນ**

ການບໍລິຫານກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

- ຮັບປະກັນຄວາມໂປ່ງໃສໃນການບໍລິຫານ ແລະ ການນຳໃຊ້ກອງທຶນ ໃຫ້ບັນລຸຕາມເປົ້າໝາຍ ແລະ ມີປະສິດທິຜົນສູງ;
- ນຳໃຊ້ກອງທຶນ ໃຫ້ສອດຄ່ອງກັບແຜນຄົ້ນຄວ້າ ແລະ ພັດທະນາ ແລະ ປະຕິບັດຕາມສັນຍາ ທີ່ໄດ້ເຊັນຮ່ວມກັນ ຢ່າງເຂັ້ມງວດ;
- ຮັບປະກັນ ການຕິດຕາມກວດກາ, ການຕີລາຄາ, ການສະຫຼຸບ ແລະ ລາຍງານຢ່າງເປັນປົກກະຕິ ຕາມສົກປີງົບປະມານ.

**ມາດຕາ 5 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນການເຄື່ອນໄຫວວຽກງານຄົ້ນຄວ້າວິທະຍາສາດ, ພັດທະນາເຕັກໂນໂລຊີ ແລະ ນະວັດຕະກຳ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ການນຳໃຊ້ ກອງທຶນ

**ມາດຕາ 6 ແຫຼ່ງລາຍຮັບ**

ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ມາຈາກແຫຼ່ງຕ່າງໆ ດັ່ງນີ້:

1. ໜຶ່ງສ່ວນຮ້ອຍ ຂອງການລົງທຶນຂອງລັດໃນແຕ່ລະປີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ;
2. ການບໍລິຈາກ ຫຼື ການປະກອບສ່ວນຂອງບຸກຄົນ ຫຼື ອົງການຈັດຕັ້ງສັງຄົມ, ການຊ່ວຍເຫຼືອລ້າ ທັງພາຍໃນ ແລະ ຕ່າງປະເທດ;
3. ການປະກອບສ່ວນຈາກ ການຈັດຕັ້ງທີ່ດຳເນີນວຽກງານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ;
4. ການບໍລິການ ແລະ ການເຄື່ອນໄຫວກິດຈະກຳຫາລາຍໄດ້ ທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ ທີ່ຖືກຕ້ອງ ຕາມລະບຽບກົດໝາຍ.

### ມາດຕາ 7 ການນຳໃຊ້ກອງທຶນ

ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ນຳໃຊ້ໃນວຽກງານ ດັ່ງນີ້:

1. ສະໜັບສະໜູນ ບັນດາໂຄງການສົ່ງເສີມການຄົ້ນຄວ້າ ແລະ ພັດທະນາ;
2. ສະໜັບສະໜູນແຫຼ່ງທຶນ ເພື່ອການຄົ້ນຄວ້າວິທະຍາສາດ, ພັດທະນາວິທະຍາສາດ ເຕັກໂນໂລຊີ ແລະ ນະວັດຕະກຳ ຕາມເນື້ອໃນ ແລະ ເງື່ອນໄຂ ທີ່ຈະກຳນົດໄວ້ໃນລະບຽບການສະເພາະ ກ່ຽວກັບການ ຄຸ້ມຄອງການຄົ້ນຄວ້າ ແລະ ພັດທະນາ;
3. ການປະຕິບັດນະໂຍບາຍ ແລະ ອຸດໜູນ ສຳລັບນັກຮຽນ, ນັກສຶກສາທີ່ມີພອນສະຫວັນ, ນັກຄົ້ນຄວ້າ-ວິໄຈ, ນັກວິທະຍາສາດ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຄົ້ນຄວ້າ ແລະ ພັດທະນາ ໂດຍໄດ້ຮັບການຢັ້ງຢືນຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ;
4. ການຄຸ້ມຄອງບໍລິຫານ ແລະ ວຽກງານອື່ນທີ່ຈຳເປັນ ຕາມການຕົກລົງຂອງສະພາບໍລິຫານກອງທຶນ;
5. ວຽກງານອື່ນທີ່ກ່ຽວຂ້ອງກັບການສົ່ງເສີມການຄົ້ນຄວ້າ ແລະ ພັດທະນາ.

### ມາດຕາ 8 ບັນຊີເງິນຝາກ

ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ພາຍໃຕ້ການຄຸ້ມຄອງ, ຕິດຕາມ ແລະ ກວດກາ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງຮັກສາໄວ້ໃນລະບົບຄັງເງິນແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ບົດແນະນຳ ກ່ຽວກັບການຄຸ້ມຄອງ ລາຍຮັບ-ລາຍຈ່າຍ ບໍລິການ ທາງດ້ານວິຊາການ ຂອງຫົວໜ່ວຍງົບປະມານ ແລະ ກອງທຶນຂອງລັດ.

### ມາດຕາ 9 ການຖອນເງິນ

ການຖອນເງິນຈາກບັນຊີເງິນຝາກຂອງກອງທຶນ ຕ້ອງປະຕິບັດຕາມແຜນການ, ແຜນງານ, ໂຄງການ ກ່ຽວກັບການຄົ້ນຄວ້າ ແລະ ພັດທະນາ ທີ່ໄດ້ຖືກຮັບຮອງຈາກສະພາບໍລິຫານກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ.

ການຖອນ ຫຼື ໂອນເງິນ ແມ່ນຜູ້ທີ່ໄດ້ຮັບການມອບສິດ ຈາກສະພາບໍລິຫານກອງທຶນ. ໃນກໍລະນີ ມີຈຸດປະສົງຖອນເງິນທັງໝົດ ແມ່ນຈະຮັກສາໄວ້ ຊາວຫ້າສ່ວນຮ້ອຍ ໃນບັນຊີເງິນຝາກຂອງກອງທຶນ.

### ມາດຕາ 10 ການຂໍອະນຸຍາດນຳໃຊ້ເງິນກອງທຶນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ພາກເອກະຊົນ ທີ່ມີຈຸດປະສົງ ຂໍນຳໃຊ້ເງິນກອງທຶນ ເພື່ອຮັບໃຊ້ວຽກງານການຄົ້ນຄວ້າ ແລະ ພັດທະນາ, ການຖ່າຍທອດເຕັກໂນໂລຊີ, ການປະດິດສ້າງ, ນະວັດຕະກຳ ແລະ ການບໍລິການວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງປະຕິບັດຕາມລະບຽບການ ແລະ ບົດແນະນຳ ການນຳໃຊ້ກອງທຶນ ຂອງສະພາບໍລິຫານກອງທຶນ ວາງອອກ.

## ໝວດທີ 3
## ການຄຸ້ມຄອງບໍລິຫານ ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ

### ມາດຕາ 11 ການຄຸ້ມຄອງກອງທຶນ

ທຸກການເຄື່ອນໄຫວວຽກງານຂອງກອງທຶນ ຕ້ອງໄດ້ດຳເນີນການພາຍໃຕ້ລະບຽບການ ຂອງສະພາບໍລິຫານກອງທຶນ ແລະ ລະບຽບການທີ່ກ່ຽວຂ້ອງກັບກອງທຶນຂອງລັດ. ສະພາບໍລິຫານ ແລະ ກອງເລຂາກອງທຶນ ເປັນຜູ້ຄຸ້ມຄອງບໍລິຫານກອງທຶນ.

### ມາດຕາ 12 ສະພາບໍລິຫານກອງທຶນ

ສະພາບໍລິຫານກອງທຶນ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກໍາມະການ ຈໍານວນໜຶ່ງ ທີ່ມາຈາກຂະແໜງການທີ່ກ່ຽວຂ້ອງ ຊຶ່ງຖືກແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ຕາມການສະເໜີ ຂອງລັດຖະມົນຕີວ່າການ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ. ສະພາບໍລິຫານກອງທຶນ ມີອາຍຸການ ຫ້າປີ ແລະຖືກແຕ່ງຕັ້ງຄືນໃໝ່ໄດ້ອີກ ໜຶ່ງສະໄໝ.

### ມາດຕາ 13 ໂຄງປະກອບບຸກຄະລາກອນ ຂອງສະພາບໍລິຫານກອງທຶນ

1. ລັດຖະມົນຕີວ່າການ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນປະທານ;
2. ລັດຖະມົນຕີຊ່ວຍວ່າການ ກະຊວງການເງິນ ເປັນຮອງປະທານ;
3. ລັດຖະມົນຕີຊ່ວຍວ່າການ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຮອງ ແລະ ເປັນຜູ້ປະຈໍາການ;
4. ຫົວໜ້າສະຖາບັນຄົ້ນຄວ້າກະສິກໍາ ແລະ ປ່າໄມ້, ກະຊວງກະສິກໍາ ແລະ ປ່າໄມ້ ເປັນກໍາມະການ;
5. ຫົວໜ້າກົມການສຶກສາ ແລະ ການຄົ້ນຄວ້າວິທະຍາສາດ, ກະຊວງສາທາລະນະສຸກ ເປັນກໍາມະການ;
6. ຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງແຜນການ ແລະການລົງທຶນ ເປັນກໍາມະການ;
7. ຫົວໜ້າກົມການສຶກສາ ຊັ້ນສູງ, ກະຊວງສຶກສາທິການ ແລະ ກິລາ ເປັນກໍາມະການ;
8. ຮອງອະທິການບໍດີ ມະຫາວິທະຍາໄລ ແຫ່ງຊາດ ເປັນກໍາມະການ;
9. ຫົວໜ້າຫ້ອງການ ສະພາບັນດິດວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ ເປັນກໍາມະການ.

ໃນກໍລະນີ ທີ່ສະມາຊິກສະພາບໍລິຫານ ທ່ານໃດໜຶ່ງ ຫາກຖືກຍົກຍ້າຍ ໄປປະຕິບັດໜ້າທີ່ອື່ນ ຫຼື ບໍ່ສາມາດປະຕິບັດໜ້າທີ່ຕົນໄດ້ນັ້ນ ແມ່ນໃຫ້ແຕ່ງຕັ້ງຜູ້ໃໝ່ແທນ.

ສະພາບໍລິຫານກອງທຶນ ມີກອງເລຂາກອງທຶນ ຊຶ່ງປະກອບດ້ວຍຜູ້ຕາງໜ້າ ຂອງບັນດາກົມ, ສະຖາບັນ ທີ່ກ່ຽວຂ້ອງ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 17 ແລະ ມາດຕາ 18 ຂອງດໍາລັດສະບັບນີ້.

### ມາດຕາ 14 ໜ້າທີ່ ແລະ ຂອບເຂດສິດ ຂອງສະພາບໍລິຫານກອງທຶນ

ສະພາບໍລິຫານກອງທຶນ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

1. ຄຸ້ມຄອງບໍລິຫານກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ຂໍ້ຕົກລົງ, ລະບຽບການຂອງກອງທຶນ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ;
2. ພິຈາລະນາຮັບຮອງ ແຜນການ, ແຜນງານ, ໂຄງການ ກ່ຽວກັບການຄົ້ນຄວ້າ-ພັດທະນາ ແລະງົບປະມານ ການເຄື່ອນໄຫວວຽກງານປະຈໍາປີຂອງກອງທຶນ;
3. ອອກລະບຽບການ, ຄໍາແນະນໍາ ກ່ຽວກັບ ການເຄື່ອນໄຫວພາຍໃນ ຂອງກອງທຶນ ແລະ ການອະນຸມັດການນໍາໃຊ້ກອງທຶນ;
4. ຮຽກປະຊຸມສະໄໝສາມັນ ແລະ ວິສາມັນ ຂອງສະພາບໍລິຫານກອງທຶນ;
5. ແຕ່ງຕັ້ງ ກອງເລຂາກອງທຶນ ແລະ ພະນັກງານຊ່ວຍວຽກ; ຊີ້ນໍາ, ຕິດຕາມກວດກາ ແລະ ປະເມີນຜົນການປະຕິບັດວຽກງານ ຂອງກອງເລຂາກອງທຶນ;
6. ລະດົມຂົນຂວາຍ ແລະ ຊອກແຫຼ່ງທຶນ ຈາກພາຍໃນ ແລະ ຕ່າງປະເທດ ເພື່ອປະກອບໃຫ້ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ;
7. ຕິດຕາມກວດກາ ແລະ ຄຸ້ມຄອງການເຄື່ອນໄຫວ ແລະ ນໍາໃຊ້ກອງທຶນ ໃນການບໍລິຫານຈັດການ ໃຫ້ຖືກຕ້ອງກັບແຜນການ ແລະ ສອດຄ່ອງກັບເປົ້າໝາຍນໍາໃຊ້, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;

8. ຄຸ້ມຄອງ, ກວດກາ ແລະ ສະຫຼຸບລາຍງານ ສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ໃຫ້ລັດຖະບານ ຢ່າງໜ້ອຍ ປີລະ ສອງຄັ້ງ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງສະພາບໍລິຫານກອງທຶນ.

**ມາດຕາ 15 ກອງປະຊຸມສະພາບໍລິຫານກອງທຶນ**

ກອງປະຊຸມສາມັນ ຂອງສະພາບໍລິຫານກອງທຶນ ຈັດຂຶ້ນປີລະ ສອງຄັ້ງ ໃນກໍລະນີມີບັນຫາສຳຄັນ ທີ່ຕ້ອງໄດ້ປຶກສາຫາລື ແລະ ພິຈາລະນາຕົກລົງດ່ວນ ກໍສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ທຸກເວລາ ຕາມການຮຽກປະຊຸມ ຂອງປະທານສະພາບໍລິຫານ ຫຼື ຕາມການສະເໜີ ຂອງສະມາຊິກສະພາບໍລິຫານ ແຕ່ ສາມ ຄົນຂຶ້ນໄປ. ກອງປະຊຸມຈະເປີດໄດ້ ກໍຕໍ່ເມື່ອມີສະມາຊິກ ຂອງສະພາບໍລິຫານເຂົ້າຮ່ວມ ຢ່າງໜ້ອຍສອງສ່ວນສາມ ຂອງຈຳນວນ ສະມາຊິກສະພາບໍລິຫານກອງທຶນທັງໝົດ.

**ມາດຕາ 16 ງົບປະມານການເຄື່ອນໄຫວ ຂອງສະພາບໍລິຫານກອງທຶນ**

ສະມາຊິກສະພາບໍລິຫານກອງທຶນ ຈະມີງົບປະມານເຄື່ອນໄຫວວຽກງານ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ຂອງສະພາບໍລິຫານກອງທຶນ ທີ່ສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

**ມາດຕາ 17 ກອງເລຂາກອງທຶນ**

ກອງເລຂາກອງທຶນ ປະກອບດ້ວຍ ຫົວໜ້າ ແລະ ຮອງຫົວໜ້າ ຈຳນວນໜຶ່ງ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍປະທານສະພາບໍລິຫານກອງທຶນ ຕາມການສະເໜີຂອງຄະນະກຳມະການ ຂອງສະພາບໍລິຫານ. ກອງເລຂາກອງທຶນ ມີອາຍຸການ ຫ້າປີ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້ ອີກໜຶ່ງສະໄໝ.

**ມາດຕາ 18 ໜ້າທີ່ ແລະ ຂອບເຂດສິດ ຂອງກອງເລຂາກອງທຶນ**

ກອງເລຂາກອງທຶນ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ ສະພາບໍລິຫານກອງທຶນ ໃນການຄຸ້ມຄອງບັນຊີ ຂອງກອງທຶນ;
2. ສ້າງ, ສັງລວມ ແລະ ນຳສະເໜີແຜນການນຳໃຊ້ກອງທຶນ ຕໍ່ສະພາບໍລິຫານກອງທຶນ ເພື່ອພິຈາລະນາ ແລະ ຮັບຮອງ;
3. ສ້າງກົດລະບຽບພາຍໃນ ກ່ຽວກັບການເຄື່ອນໄຫວ ຂອງສະພາບໍລິຫານກອງທຶນ ແລະ ລະບຽບການຄຸ້ມຄອງ ແລະ ນຳໃຊ້ກອງທຶນ;
4. ສຶກສາ, ຄົ້ນຄວ້າ ວິທີການ ແລະ ຮູບແບບ ໃນການລະດົມຂົນຂວາຍທຶນ ຈາກພາຍໃນ ແລະ ຕ່າງປະເທດ;
5. ໂຄສະນາເຜີຍແຜ່ ກ່ຽວກັບຄວາມໝາຍຄວາມສຳຄັນ ແລະ ບົດບາດຄວາມຮັບຜິດຊອບ ຂອງກອງທຶນ;
6. ຕິດຕາມກວດກາ ແລະ ປະເມີນຜົນການນຳໃຊ້ກອງທຶນ ຂອງພາກສ່ວນຕ່າງໆ ທີ່ໄດ້ຮັບອະນຸມັດ;
7. ປະສານສົມທົບ ແລະ ຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ຕາມການຊີ້ນຳຂອງສະພາບໍລິຫານກອງທຶນ;
8. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານຂອງກອງທຶນ ໃນແຕ່ລະໄລຍະ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ຕາມການມອບໝາຍ ຂອງສະພາບໍລິຫານກອງທຶນ.

## ໝວດທີ 4
## ການກວດສອບ ແລະ ລະບອບການລາຍງານ

**ມາດຕາ 19 ການກວດສອບບັນຊີ**

ບັນຊີຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງໄດ້ຮັບການກວດສອບ ຕາມລະບຽບການ ກ່ຽວກັບການກວດສອບບັນຊີຂອງລັດ ຊຶ່ງດຳເນີນການໂດຍ ອົງການກວດສອບແຫ່ງລັດ ຫຼື ອົງການກວດກາ

ທີ່ໄດ້ຮັບມອບໝາຍ. ການກວດສອບບັນຊີກອງທຶນ ປະກອບມີ ສອງ ປະເພດ ຊຶ່ງປະກອບດ້ວຍ ການກວດກາປົກກະຕິ ແລະ ການກວດກາສະເພາະກິດ.

**ມາດຕາ 20 ການກວດກາປົກກະຕິ**

ເພື່ອເຮັດໃຫ້ການນຳໃຊ້ກອງທຶນ ຖືກຕ້ອງຕາມເປົ້າໝາຍ, ແຜນດຳເນີນງານ ແລະ ລະບຽບກົດໝາຍ, ສະພາບໍລິຫານກອງທຶນ ຕ້ອງດຳເນີນການກວດກາການນຳໃຊ້ກອງທຶນ ຢ່າງເປັນປົກກະຕິ ແລະ ມີກຳນົດເວລາອັນແນ່ນອນ.

**ມາດຕາ 21 ການກວດກາສະເພາະກິດ**

ໃນກໍລະນີຈຳເປັນ ລັດຖະບານ ຈະດຳເນີນການກວດກາ ຕໍ່ການເຄື່ອນໄຫວຮອບດ້ານ ຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ທຸກເວລາ.

**ມາດຕາ 22 ການລາຍງານ**

ກອງເລຂາກອງທຶນ ຂອງສະພາບໍລິຫານ ຕ້ອງສົ່ງບົດລາຍງານ ກ່ຽວກັບຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດວຽກງານຂອງຕົນ ແລະ ບົດລາຍງານ ຂອງອົງການກວດສອບແຫ່ງລັດ ໃຫ້ແກ່ສະພາບໍລິຫານກອງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງຮັບຊາບ ໃນແຕ່ລະໄລຍະ ຕາມລະບຽບການຂອງສະພາບໍລິຫານກອງທຶນ ວາງອອກ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 23 ເຄື່ອງໝາຍ ແລະ ຕາປະທັບ**

ສະພາບໍລິຫານກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ມີເຄື່ອງໝາຍ ແລະ ຕາປະທັບ ເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ.

**ມາດຕາ 24 ການຈັດຕັ້ງປະຕິບັດ**

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ມີໜ້າທີ່ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ ແລະ ລາຍງານສະພາບການເຄື່ອນໄຫວຮອບດ້ານຂອງກອງທຶນ ໃຫ້ລັດຖະບານ ປີລະສອງຄັ້ງ.

ບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈົ່ງຮັບຮູ້ ແລະ ຈັດຕັ້ງ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 25 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ທອງສິງ ທຳມະວົງ